**ໂຄງປະກອບ ຂອງຄະນະກຳມະການປະສານງານກອງທຶນໂລກ:**

- ຄະນະກຳມະການປະສານງານກອງທຶນໂລກ ປະກອບມີ 24 ບ່ອນນັ່ງ. ຈຳນວນບ່ອນນັ່ງຖືກກຳນົດ ແລະ ຕັດສິນ ໂດຍຄະນະກຳມະການປະສານງານກອງທຶນໂລກ ແລະ ສາມາດປ່ຽນແປງໄດ້;
- ແຕ່ລະບ່ອນນັ່ງມີຕົວແທນ 2 ທ່ານ: ສະມາຊິກສົມບູນ ແລະ ສະມາຊິກສຳຮອງ;
- ໂຄງປະກອບຂອງຄະນະກຳມະການປະສານງານກອງທຶນໂລກ ປະກອບດ້ວຍ 3 ພາກສ່ວນຄື: ລັດຖະບານ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ ແລະ ຄູ່ຮ່ວມພັດທະນາ;

| ພາກສ່ວນໃຫຍ່ຂອງຄະນະກຳມະການປະສານງານກອງທຶນໂລກ | ພາກສ່ວນຍ່ອຍ ແລະ ຈຳນວນບ່ອນນັ່ງ |
|---|---|
| ລັດຖະບານ | • ກະຊວງ (6)<br>• ອົງການຈັດຕັ້ງມະຫາຊົນ (2) |
| ອົງການຮ່ວມມືຫລາຍຝ່າຍແລະສອງຝ່າຍ | • ຮ່ວມມືຫລາຍ/ສອງຝ່າຍ (5) |
| ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ | • ສະມາຄົມທີ່ບໍ່ຫວັງຜົນກຳໄລ (1)<br>• ອົງການຈັດຕັ້ງທາງສາສະໜາ (1)<br>• ຜູ້ໄດ້ຮັບຜົນກະທົບ/ຜູ້ຕິດເຊື້ອ: ຕົວແທນອົງການຈັດຕັ້ງ, ສະມາຄົມ ແລະ ອື່ນໆ ທີ່ເຮັດວຽກກ່ຽວກັບຜູ້ໄດ້ຮັບຜົນກະທົບ/ຜູ້ຕິດເຊື້ອ, ແມ່ຍິງ ແລະ ຍິງໜຸ່ມ, ຊາວໜຸ່ມ ແລະ ອື່ນໆ (5)<br>• ອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ (2)<br>• ສະຖາບັນການສຶກສາ (1)<br>• ເອກະຊົນ (1) |

- ຕົວແທນໃນຄະນະກຳມະການປະສານງານກອງທຶນໂລກທີ່ມາຈາກອົງການຈັດຕັ້ງບໍ່ສັງກັດລັດຖະບານຕ້ອງບໍ່ຫລຸດ 40% ຂອງຈຳນວນສະມາຊິກຄະນະກຳມະການປະສານງານ-ກອງທຶນໂລກທັງໝົດ;
- ຄະນະກຳມະການປະສານງານກອງທຶນໂລກຕ້ອງຮັບປະກັນວ່າຕົວແທນຂອງຄະນະກຳມະການປະສານງານກອງທຶນໂລກ ຕ້ອງມາຈາກທັງເຂດຊົນນະບົດ ແລະ ຕົວເມືອງບໍ່ສະເພາະແຕ່ຢູ່ພາຍໃນນະຄອນຫລວງ ແລະ ຕອບສະໜອງເຖິງຜົນປະໂຫຍດຂອງເຂົາເຈົ້າ;
- ຄະນະກຳມະການປະສານງານກອງທຶນໂລກ ຈະຕ້ອງຮັບປະກັນສິດສະເໝີພາບຍິງ-ຊາຍ ແລະ ໃນຈຳນວນຕົວແທນຂອງຄະນະກຳມະການປະສານງານກອງທຶນໂລກ ຕ້ອງມີ-ຈຳນວນບຸກຄົນທີ່ເຂົ້າໃຈບົດບາດຍິງຊາຍທີ່ຕິດພັນກັບສາມພະຍາດ.

# ໂຄງປະກອບຂອງຄະນະກຳມະການປະສານງານກອງທຶນໂລກ (24 ທ່ານ)

**ພາກສ່ວນລັດຖະບານ**
(ມີຜູ້ແທນ 8 ທ່ານ: 33.33 %)

1. ກະຊວງສາທາລະນະສຸກ
2. ກະຊວງແຜນການແລະການຮ່ວມມື
3. ກະຊວງການເງິນ
4. ກະຊວງການຕ່າງປະເທດ
5. ກະຊວງພາຍໃນ
6. ກະຊວງແຮງງານແລະສະຫວັດດີການສັງຄົມ
7. ສະຫະພັນກຳມະບານລາວ
8. ສະຫະພັນແມ່ຍິງລາວ

**ພາກສ່ວນອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ**
(ມີຜູ້ແທນ 5 ທ່ານ: 20.8%)

1. ສະຖານທູດຝຣັ່ງ
2. ສະຖານທູດລຸກຊໍາບວກ/ ໂຄງການພັດທະນາລຸກຊໍາບວກ
3. WHO/UNAIDS
4. JICA
5. USAID/WB

**ພາກສ່ວນທີ່ບໍ່ສັງກັດລັດຖະບານ**
(ມີຜູ້ແທນ 11 ທ່ານ: 45.8%)

**ສະມາຄົມບໍ່ຫວັງຜົນກຳໄລ: 1 ທ່ານ**

1. ອົງການກາແດງລາວ/ສະມາຄົມຜູ້ຕິດເຊື້ອ

**ອົງການສາດສະໜາ: 1 ທ່ານ**

1. ໂຄງການເມດຕາທຳ

**ກຸ່ມຜູ້ໄດ້ຮັບຜົນກະທົບ/ຜູ້ຕິດເຊື້ອ: 5 ທ່ານ**

1. ຜູ້ແທນຜູ້ຕິດເຊື້ອ
2. ຜູ້ແທນພະຍາດວັນນະໂຣກ
3. ຜູ້ແທນພະຍາດໄຂ້ຍຸງ
4. ຜູ້ແທນເພດຍິງ-ຊາຍ/ອາສາສະມັກ
5. ອາສາສະມັກ

**ອົງການທີ່ບໍ່ສັງກັດລັດຖະບານ: 2 ທ່ານ**

1. Child Fund Lao /HPA
2. PSI/Handicap International (HI)

**ສະຖາບັນການສຶກສາ: 1 ທ່ານ**

1. ສະຖາບັນສາທາລະນະສຸກສາດ

**ພາກສ່ວນເອກກະຊົນ: 1 ທ່ານ**

1. ສະພາອຸດສະຫະກຳ ແລະ ການຄ້າລາວ / ໂຮງງານຢາເລກ 3